ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ

## ຄູ່ມືແນະນຳ

# ການຄຸ້ມຄອງກິດຈະກຳຂອງກຸ່ມ





# ຄຳນຳ

ຄູ່ມືສະບັບນີ້ສ້າງຂຶ້ນເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຊາວກະສິກອນ, ອົງການຈັດຕັ້ງຊາວກະສິກອນໃນຂອບເຂດທົ່ວປະເທດ ໃນການຍົກລະດັບຄວາມຮູ້, ຄວາມເຂົ້າໃຈ ກຽ່ວກັບ ການຄຸ້ມຄອງກິດຈະກຳຂອງກຸ່ມຜູ້ຜະລິດກະສິກຳ ເພື່ອການບໍລິຫານຈັດການບັນດາໜ້າວຽກ ຫຼື ກິດຈະກຳຕ່າງໆ ຢ່າງເປັນລະບົບຕາມວົງຈອນການຈັດການບໍລິຫານ. ແນໃສ່ໃຫ້ມີການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ.

ຄູ່ມືສະບັບນີ້ໄດ້ມີການຄັດຈ້ອນ, ສັງລວມຈາກບັນດາ ຄູ່ມືການຄຸ້ມຄອງວົງຈອນໂຄງການ, ການວາງແຜນໂຄງການພັດທະນາບ້ານ , ເອກະສານດ້ານວິຊາການ ແລະ ປະສົບການຕົວຈິງໃນພາກປະຕິບັດຂອງຫຼາຍພາກສ່ວນ ໂດຍມີການເຂົ້າຮ່ວມປະກອບຄຳຄິດຄຳເຫັນຈາກຕົວແທນຂອງຊາວກະສິກອນໃນຫຼາຍທ້ອງຖິ່ນເປັນຕົ້ນຈາກ ແຂວງວຽງຈັນ ແລະ ກຸ່ມຕົວແທນຊາວກະສິກອນລາວ.

# ສາລະບານ

ໜ້າ

*I. ຈຸດປະສົງການຄຸ້ມຄອງກິດຈະກໍາຂອງກຸ່ມ ................................ 03*

1.1 ຄວາມສໍາຄັນ, ປະໂຫຍດ ການຄຸ້ມຄອງກິດຈະກໍາຂອງກຸ່ມ ............. 04
1.2 ວົງຈອນການຄຸ້ມຄອງກິດຈະກໍາຂອງກຸ່ມ.................................05

*II. ວິທີການສໍາລັບວົງຈອນການຄຸ້ມຄອງກິດຈະກໍາຂອງກຸ່ມ ................06*

2.1. ການວາງແຜນ .........................................................06
ກ. ການວິເຄາະສະວອດ SWOT ..................................07
ຂ. ວິທີການວິເຄາະ ....................................................08
ຄ. ສ້າງເປັນແຜນກິດຈະກໍາ ..........................................10

2.2. ການຈັດຕັ້ງປະຕິບັດ ................................................11
2.3. ການຕິດຕາມ ແລະ ປະເມີນຜົນ ..........................................12
2.4. ການວິເຄາະ, ທວນຄືນກິດຈະກໍາຂອງກຸ່ມ..............................15

# ການຄຸ້ມຄອງກິດຈະກຳຂອງກຸ່ມ

## I. ຈຸດປະສົງການຄຸ້ມຄອງກິດຈະກຳຂອງກຸ່ມ

ການຄຸ້ມຄອງກິດຈະກຳຂອງກຸ່ມ ແມ່ນເພື່ອການບໍລິຫານຈັດການບັນດາໜ້າວຽກ ຫຼື ກິດຈະກຳຕ່າງໆ ຢ່າງເປັນລະບົບຕາມວົງຈອນການຈັດການບໍລິຫານໃຫ້ຄົບຖ້ວນ ບໍ່ວ່າຈະເປັນການວາງແຜນ, ການຈັດຕັ້ງປະຕິບັດກິດຈະກຳ, ການເຄື່ອນໄຫວການນຳພາຂອງຄະນະບໍລິຫານງານກຸ່ມ, ຫຼື ການສ້າງແຮງຈູງໃຈ ແລະ ການຄຸ້ມຄອງຄວບຄຸມຊັບພະຍາກອນຕ່າງໆໃຫ້ສຳພັນກັບໄລຍະເວລາໃນການຈັດຕັ້ງປະຕິບັດເພື່ອໃຫ້ສຳເລັດຕາມເປົ້າໝາຍ ຫຼື ຈຸດປະສົງທີ່ວາງໄວ້.



## 1.1. ການຄຸ້ມຄອງກິດຈະກຳຂອງກຸ່ມມີປະໂຫຍດ ແລະ ຄວາມສຳຄັນຄື:

- ຖ້າມີການຄຸ້ມຄອງທີ່ດີເຮັດໃຫ້ກຸ່ມເກີດມີການພັດທະນາທີ່ດີຂຶ້ນເລື້ອຍໆ
- ມີການເຮັດວຽກທີ່ເປັນລະບົບແບບຕ່ອງໂສ້,ມີກົນໄກການເຮັດວຽກທີ່ດີ.
- ກຸ່ມຈະມີແຜນປະຈຳງວດ, ປະຈຳໄຕມາດ, ປະຈຳປີ ແລະ ມີ ການຈັດຕັ້ງປະຕິບັດກິດຈະກຳຢ່າງເປັນປົກກະຕິ.
- ແຕ່ລະຝ່າຍຈະເຂົ້າໃຈບົດບາດໜ້າທີ່ການແບ່ງຄວາມຮັບຜິດຊອບໃນແຕ່ລະກິດຈະກຳຢ່າງລະອຽດ.
- ມີລະບຽບການ ແລະ ການຈັດຕັ້ງເຄື່ອນໄຫວວຽກງານຢ່າງລະອຽດ
- ເຮັດໃຫ້ເກີດມີສິ່ງຈູງໃຈ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການປະຕິບັດໜ້າທີ່.



## 1.2. ວົງຈອນການຄຸ້ມຄອງກິດຈະກຳຂອງກຸ່ມ:

ໝາຍເຖິງການສະແດງຂັ້ນຕອນ ແລະ ຄວາມສຳພັນໃນການຈັດຕັ້ງປະຕິບັດກິດຈະກຳ ຕັ້ງແຕ່ການເລີ້ມເຮັດກິດຈະກຳຈົນເຖິງສິ້ນສຸດກິດຈະກຳ ລວມເຖິງການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ, ການວິເຄາະກ່ຽວກັບວົງຈອນກິດຈະກຳຈະຊ່ວຍໃຫ້ເຫັນພາບລວມ, ບັນຫາ ແລະ ວິທີແກ້ໄຂຂອງວຽກທີ່ຈັດຕັ້ງປະຕິບັດນັ້ນ ໂດຍມີອົງປະກອບຂອງວົງຈອນ 4 ຂັ້ນຕອນຄືດັ່ງລຸ່ມນີ້:



## II. ວິທີການລະອຽດໃນການຄຸ້ມຄອງກິດຈະກຳຂອງກຸ່ມ

ອີງໃສ່ແຜນວາດ ການຄຸ້ມຄອງກິດຈະກຳຂອງກຸ່ມທີ່ມີ 4 ຂັ້ນຕອນນັ້ນ ເຮົາຈະໄດ້ ເວົ້າລະອຽດໃນແຕ່ລະຂັ້ນຕອນຄື:






# 2.1. ການວາງແຜນ:

ກ່ອນການວາງແຜນຕ້ອງໄດ້ຮູ້ກ່ຽວກັບ ບັນຫາ ແລະ ສະພາບລວມຈຸດດີ, ຈຸດອ່ອນຂອງກຸ່ມສະນັ້ນຈຶ່ງຕ້ອງໄດ້ມີການວິເຄາະສະຖານະພາບຂອງກຸ່ມສາກ່ອນ

ວິທີການວິເຄາະສະຖານະພາບຂອງກຸ່ມແມ່ນມີຫຼາຍວິທີ ແຕ່ໃນນີ້ຈະນໍາສະເໜີ ກ່ຽວກັບ ວິທີການວິເຄາະແບບ ສະວອດ SWOT ຄືດັ່ງລຸ່ມນີ້:

## ກ. ການວິເຄາະສະວອດ (SWOT)ແມ່ນຫຍັງ?

SWOT ເປັນເຄື່ອງມືໃນການ ວິເຄາະທ່າແຮງ/ຈຸດດີ, ຈຸດອ່ອນ, ໂອກາດ ແລະ ຄວາມສ່ຽງ ແມ່ນການຄົ້ນຄວ້າເຖິງບັນຫາ ປັດໃຈພາຍໃນ, ປັດໃຈພາຍນອກ ທີ່ເປັນທ່າແຮງ ຫຼື ອຸປະສັກ ຊອກໃຫ້ເຫັນຈຸດດີ ແລະ ຈຸດອ່ອນທີ່ກ່ຽວຂ້ອງກັບການເຮັດວຽກຂອງກຸ່ມ.

| | |
|---|---|
| **ຈຸດດີ :** | ເປັນຈຸດດີທີ່ເກີດຈາກພາຍໃນຂອງກຸ່ມເຊັ່ນ: ຈຸດດີດ້ານການຜະລິດ, ດ້ານການຕະຫຼາດ ອື່ນໆ. |
| **ຈຸດອ່ອນ :** | ແມ່ນຂໍ້ບົກຜ່ອງຕ່າງໆທີ່ເກີດຢູ່ພາຍໃນກຸ່ມ ເຊິ່ງກຸ່ມຈະຕ້ອງຫາວິທີໃນການແກ້ໄຂບັນຫານັ້ນດ້ວຍຕົນເອງ. |
| **ໂອກາດ:** | ເປັນຜົນມາຈາກສະພາບແວດລ້ອມພາຍນອກຂອງກຸ່ມທີ່ເອື້ອ ອໍານວຍ ທາງດ້ານປະໂຫຍດ ຫຼື ສົ່ງເສີມການປະຕິບັດກິດຈະກໍາຂອງກຸ່ມເຊັ່ນ: ນະໂຍບາຍ. |
| **ຄວາມສ່ຽງ:** | ເປັນຂໍ້ຈໍາກັດທີ່ມີອຸປະສັກເກີດຈາກສະພາບແວດລ້ອມພາຍນອກເຊິ່ງກຸ່ມຈະຕ້ອງປັບກົນໄກການຈັດການ ຄຸ້ມຄອງບໍລິຫານ ແລະຕ້ອງພະຍາຍາມແກ້ໄຂອຸປະສັກທີ່ເກີດຂຶ້ນໃຫ້ໄດ້. |

## ຂ. ວິທີການປະຕິບັດການວິເຄາະ:

- ອະທິບາຍໃຫ້ຜູ້ເຂົ້າຮ່ວມກຽ່ວກັບຈຸດປະສົງຂອງການຄົ້ນຄວ້າ
- ເອົາແຜນວາດການວິເຄາະທີ່ກຽມໄວ້ອອກມາ.

| | |
|---|---|
| ຈຸດດີ (ພາຍໃນ) | ຈຸດອ່ອນ (ພາຍໃນ) |
| ໂອກາດ (ພາຍນອກ) | ຄວາມສ່ຽງ (ພາຍນອກ) |

- ການປະຊຸມກຸ່ມບໍ່ຄວນຈະເຮັດກຸ່ມໃຫ່ຍເກີນໄປ, ປະມານ 15 ຄົນ (ຖ້າມີຫຼາຍຄົນກໍ່ຄວນເຮັດເປັນຫຼາຍກຸ່ມ).
- ລະດົມແນວຄວາມຄິດຂອງສະມາຊິກກຸ່ມໃຫ້ໄປຕາມແຜນວາດທີ່ກະກຽມໄວ້ຕາມແຕ່ລະຫ້ອງວິເຄາະ.
- ທົບທວນຜົນການວິເຄາະຄືນແລ້ວນຳສະເໜີຕໍ່ທີ່ປະຊຸມກຸ່ມໃຫຍ່.
- ສັງລວມເອກະສານຜົນຂອງການວິເຄາະ, ຄັດຈ້ອນຫົວຂໍ້ທີ່ເຫັນວ່າສຳຄັນ, ຫົວຂໍ້ຫຼັກ ເພື່ອວາງແຜນການປະຕິບັດ ແລະ ແຜນການຕິດຕາມຕໍ່ໄປ.

**ຕົວຢ່າງຄຳຖາມ:**

➡ ມີປັດໃຈໃດແດ່ຈາກພາຍນອກທີ່ເປັນທ່າແຮງໃນການປັບປຸງວຽກງານພາຍໃນກຸ່ມ?

➡ ມີຈຸດດີຫຍັງແດ່ຢູ່ພາຍໃນກຸ່ມຂອງພວກເຮົາ?

➡ ພວກເຮົາສາມາດແກ້ໄຂຈຸດອ່ອນນັ້ນໄດ້ຄືແນວໃດ?

➡ ກຸ່ມພວກເຮົາຈະປ້ອງກັນການລະບາດຂອງພະຍາດໄດ້ຄືແນວໃດ?

➡ ພວກເຮົາຈະເຮັດແນວໃດເພື່ອເຮັດໃຫ້ການປະສານງານຂອງລັດກັບຄະນະບໍລິຫານງານກຸ່ມດີຂຶ້ນ?

# ຕົວຢ່າງ ວິເຄາະ ກິດຈະກຳຂອງກຸ່ມປູກພືດຜັກອິນຊີ

| ຈຸດດີ: | ຈຸດອ່ອນ : |
| --- | --- |
| • ຜູ້ຈັດການມີຄວາມສາມາດສູງ<br>• ພືດຜັກອິນຊີມີຄຸນນະພາບດີ<br>• ມີຕະຫຼາດຮອງຮັບ | • ສະມາຊິກບໍ່ຮູ້ໜັງສື<br>• ຂາດຄວາມຮູ້ເລື້ອງການບໍລິຫາການເງິນ<br>• ການຫຸ້ມຫໍ່ ແລະ ສ້າງມູນຄ່າເພີ້ມໃຫ້ກັບຜະລິດ ຕະພັນຍັງເຮັດບໍ່ໄດ້. |
| **ໂອກາດ:** | **ອຸປະສັກ/ຄວາມສ່ຽງ:** |
| • ມີຄວາມສາມາດໃນການສ້າງລະບົບການປູກພືດຜັກອິນຊີ<br>• ຕະຫຼາດມີຄວາມຕ້ອງການຫຼາຍ<br>• ມີສະຖາບັນຝຶກອົບຮົມເລື້ອງການສ້າງມູນຄ່າເພີ້ມ<br>• ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ,ໂຄງການໄດ້ລົງຊຸກຍູ້ສົ່ງເສີມເປັນແຕ່ລະໄລຍະ. | • ຍັງອີງໃສ່ທຶນຊ່ວຍເຫຼືອ<br>• ພືດຜັກບາງຊະນິດບໍ່ພຽງພໍໃນຊ່ວງລະດູຝົນ<br>• ມີພືດຜັກທົ່ວໄປຂາຍໃນທ້ອງຕະຫຼາດຈຳນວນຫຼາຍ ເຮັດໃຫ້ມີຄູ່ແຂ່ງຫຼາຍ.<br>• ສ່ຽງຕໍ່ພະຍາດແມງໄມ້ລະບາດ. |




# ຄ. ສ້າງເປັນແຜນກິດຈະກຳ

ພາຍຫຼັງທີ່ມີການປະເມີນ ຫຼື ວິເຄາະສະຖານະພາບຕ່າງໆແລ້ວກໍ່ຈະເຫັນບັນຫາ ແລະກິດຈະກຳທີ່ຕ້ອງສືບຕໍ່ປະຕິບັດ ແລະ ຕ້ອງໄດ້ປັບປຸງ ດັ່ງນັ້ນຈຶ່ງຕ້ອງສ້າງເປັນແຜນໃສ່ຕາຕະລາງ ແລະ ຮ່າງເປັນເອກະສານຂໍ້ຕົກລົງສຳລັບແຜນທີ່ຈະສືບຕໍ່ ແລະ ປັບປຸງ.

### ຕົວຢ່າງຕາຕະລາງ: ແຜນກິດຈະກຳຂອງກຸ່ມ

| ລ/ດ | ກິດຈະກຳ | ໝາກຜົນທີ່ຄາດຫວັງ | ເວລາ | ຜູ້ຮັບຜິດຊອບ | ປັດໃຈນຳເຂົ້າ | | | ເງື່ອນໄຂທີ່ຈຳເປັນ |
|---|---|---|---|---|---|---|---|---|
| | | | | | ບຸກຄະລາກອນ | ວັດຖຸ | ທຶນ | |
| 1 | ປັບປຸງການຫຸ້ມຫໍ່ ແລະ ສ້າງມູນຄ່າເພີ້ມໃຫ້ກັບຜະລິດຕະພັນພືດຜັກອິນຊີ | ຂາຍໄດ້ຫຼາຍ ແລະ ໄດ້ລາຄາສູງຂຶ້ນກວ່າເກົ່າ | ເດືອນ 7 | ກຸ່ມ + ຫ້ອງການກະສິກຳ | ກຸ່ມເອງ | ສະຕິກເກີ້ໂລໂກ້ | ງົບຂອງກຸ່ມເອງ | |
| 2 | ການບໍລິຫານການເງິນ | ສາມາດບໍລິຫານບັນຊີລວມ, ລາຍຮັບ, ລາຍຈ່າຍໄດ້ | ເດືອນ 8 | ກຸ່ມ+ ຜູ້ໃຫ້ທຶນ | ຄະນະບໍລິຫານກຸ່ມ | | ກຸ່ມ+ ຜູ້ໃຫ້ທຶນ | |





# 2.2. ການຈັດຕັ້ງປະຕິບັດ:

- ປະຕິບັດຮ່ວມກັນເພື່ອໃຫ້ເກີດຜົນສຳເລັດ ແລະ ຜົນໄດ້ຮັບທີ່ຄາດຄະເນໄວ້
- ການເຮັດວຽກແບບມີສ່ວນຮ່ວມ ແລະ ເບິ່ງດ້ານບົດບາດຍິງຊາຍ.
- ໃຫ້ກຸ່ມປະຕິບັດຕາມພາລະບົດບາດ ແລະ ລະບຽບການຕ່າງໆທີ່ໄດ້ກຳນົດໄວ້ພາຍໃນກຸ່ມ.
- ທົບທວນກິດຈະກຳເປັນໄລຍະ, ຕ້ອງມີການລາຍງານ, ສ່ອງແສງ, ໃຫ້ທິດຊີ້ນຳ ແລະ ສ້າງຂວັນກຳລັງໃຈໃຫ້ທີມງານພາຍໃນກຸ່ມ.

*ກ. ຜູ້ບໍລິຫານກຸ່ມ: ກຳນົດແຜນພັດທະນາບຸກຄະລາກອນ ເປັນໄລຍະ*

- ວິເຄາະຄວາມຕ້ອງການໃນການຝຶກອົບຮົມໃຫ້ກັບກຸ່ມ: ດ້ານການບໍລິຫານ ເພື່ອຍົກລະດັບຄວາມອາດສາມາດ ແລະ ການຮຽນຮູ້.
- ຈັດອົບຮົມເຊັ່ນ: *ການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ, ການປະເມີນ, ການວິເຄາະ, ການລາຍງານ, ທັກສະດ້ານການສື່ສານ, ການເປັນຜູ້ນຳ, ການຄຸ້ມຄອງພະນັກງານໃນລະບົບການຈັດຕັ້ງ, ວິໃສທັດ, ມາດຕະຖານການຄຸ້ມຄອງທາງດ້ານການເງິນ.*
- ມີການປະເມີນ ແລະ ສ່ອງແສງກຽ່ວກັບການຝຶກອົບຮົມແຕ່ລະຄັ້ງ.
- ມີໃບຢັ້ງຢືນຜ່ານການຝຶກອົບຮົມພາຍຫຼັງສຳເລັດ.

*ຂ. ການຄຸ້ມຄອງພະນັກງານ*

ປັດໃຈສຳຄັນໃນການຄຸ້ມຄອງ ຈະຕ້ອງໄດ້ຈັດການກັບບັນຫາຫຼາຍຢ່າງ:

- ໃຫ້ການສ່ອງແສງແບບຍ້ອງຍໍແບບລັກສະນະສ້າງສັນທີ່ເປັນການກະຕຸ້ນໃຫ້ກຳລັງໃຈ.
- ການປະຕິບັດໜ້າທີ່, ການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ, ການປະຕິບັດລະບຽບ
- ຈະຕ້ອງສ້າງຄວາມສາມາດໃຫ້ເຂົາເຈົ້າພ້ອມດ້ວຍຄວາມເປັນເຈົ້າການ.
- ວິທີບໍລິຫານຕົນເອງໃຫ້ເກີດປະ ສິດຕິພາບ.



# 2.3. ການຕິດຕາມ ແລະ ປະເມີນຜົນ

➡ **ຈຸດປະສົງຂອງການຕິດຕາມກວດກາ ແລະ ປະເມີນຜົນແມ່ນເພື່ອ:**

- ປັບປຸງຄຸນນະພາບຂອງຂະບວນການປະຕິບັດວຽກທີ່ກຳລັງດຳເນີນຢູ່.
- ເພື່ອຍົກລະດັບຄວາມຮັບຜິດຊອບຕໍ່ກິດຈະກຳ ແລະ ສະແດງໃຫ້ສາທາລະນະຊົນໄດ້ຮັບຮູ້.
- ເພື່ອໃຫ້ມີບົດຮຽນສຳລັບກິດຈະກຳອື່ນໆ ໃນຕໍ່ໜ້າ.

ໜ້າວຽກລວມໃນການຕິດຕາມ :

➡ ຕິດຕາມ ແລະ ປະເມີນຜົນຂະບວນການເຮັດວຽກວ່າເປັນໄປຕາມແຜນວຽກ ແລະ ຄາດໝາຍທີ່ວາງໄວ້ ຫຼື ບໍ່.

➡ ມີການລົງຢ້ຽມຢາມເພື່ອຕິດຕາມຢູ່ສະຖານທີ່ຕົວຈິງ

➡ ທົບທວນປະຈຳໄຕມາດ / ໄລຍະກາງ, ປະຈຳປີ, ງວດ, ເດືອນ ເພື່ອຕິດຕາມປະເມີນຜົນການຮຽນຮູ້.

➡ ທົບທວນປະຈຳປີເພື່ອວິເຄາະ,ຮິບໂຮມເລື່ອງລາວທີ່ປະສົບຜົນສຳເລັດແລະວາງແຜນ ການສຳລັບປີຕໍ່ໄປ.

➡ ສ້າງແບບຟອມໃນການຕິດຕາມ, ປະເມີນຢ່າງເປັນລະບົບ.

**2.3.1 ການຕິດຕາມກວດກາ:** ເພື່ອກວດກາເບິ່ງວ່າ ແຜນດຳເນີນງານກິດຈະກຳຂອງກຸ່ມມີຄວາມຄືບໜ້າໄປຕາມແຜນບໍ່ ແລະ ເພື່ອດັດແປງແກ້ໄຂແຜນການທີ່ຈຳເປັນໃຫ້ທັນສະພາບ. ການຕິດຕາມຄວນເບິ່ງໃນຫຼາຍອັນເພື່ອໃຫ້ຕອບໂຈດໄດ້ເຊັ່ນ:

| | | |
|---|---|---|
| 1 | **ແມ່ນໃຜ:** | ຄົນພາຍໃນກຸ່ມເອງ (ຜູ້ປະຕິບັດ) ? |
| 2. | **ເວລາໃດ:** | ທຸກໆເດືອນ ຕະຫຼອດໄລຍະປະຕິບັດກິດຈະກຳ ? |
| 3. | **ແມ່ນຫຍັງ:** | ສະພາບປະຈຸບັນຂອງປັດໃຈນຳເຂົ້າ, ກິດຈະກຳ, ໝາກຜົນ ແລະ ຂໍ້ສົມມຸດຕິຖານ |
| 4. | **ຢູ່ໃສ:** | ສະຖານທີ່ຂອງການປະຕິບັດກິດຈະກຳ |
| 5. | **ແນວໃດ:** | ໂດຍການນຳໃຊ້ຕາມແບບຟອມແຜນດຳເນີນງານຂອງກຸ່ມ |





**2.3.2. ການປະເມີນຜົນ:** ເພື່ອວິເຄາະການປະຕິບັດກິດຈະກຳຢ່າງລະອຽດ ໂດຍອີງໃສ່ດ້ານປະສິດທິຜົນ, ປະສິດທິພາບ, ຄວາມທ່ຽງຕົງ ແລະ ອື່ນໆ. ເຊິ່ງຕ້ອງໃຫ້ຕອບໂຈດໄດ້ເຊັ່ນ:

| | | |
|---|---|---|
| 1 | **ແມ່ນໃຜ:** | ຄົນຂອງກຸ່ມ (ຜູ້ປະຕິບັດ) |
| 2. | **ເວລາໃດ:** | 6ເດືອນ ທ້າຍປີ ແລະ ຫຼັງຈາກສຳເລັດກິດຈະກຳ |
| 3. | **ແມ່ນຫຍັງ:** | ການປະເມີນຜົນແມ່ງອີງໃສ່ 5 ດ້ານດັ່ງນີ້:<br>➡ ປະສິດທິຜົນ: ການປະເມີນ ແລະ ວິເຄາະຜົນສຳເລັດຂອງແຜນດຳເນີນງານກິດຈະກຳທີ່ໄດ້ວາງໄວ້.<br>➡ ຜົນກະທົບ: ການຕີລາຄາປະເມີນຜົນກະທົບທີ່ຄາດຫັວງໄວ້ ແລະ ບໍ່ໄດ້ຄາດຫວັງທີ່ອາດເກີດຂຶ້ນໄດ້ , ຜົນທີ່ເປັນທັງດ້ານບວກ ແລະ ດ້ານລົບ.<br>➡ ປະສິດທິພາບ: ຕີລາຄາປະເມີນລະດັບການພົວພັນລະຫວ່າງໝາກຜົນ ແລະ ປັດໃຈນຳເຂົ້າ. ໝາກຜົນຫຼາຍຍິ່ງດີ. ປັດໃຈນຳເຂົ້າຕ້ອງໄດ້ເບິ່ງທາງດ້ານປະລິມານ, ຄຸນນະພາບ ແລະ ເວລາ.<br>➡ ຄວາມທ່ຽງຕົງ: ການຕີລາຄາຄວາມສຳຄັນຂອງຈຸດປະສົງແຜນດຳເນີນງານ ແລະ ເປົ້າໝາຍລວມທາງດ້ານນະໂຍບາຍພັດທະນາຂອງກຸ່ມ ແລະ ຄວາມຕ້ອງການຂອງຜູ້ໄດ້ຮັບຜົນປະໂຫຍດກຸ່ມ.<br>➡ ຄວາມຍືນຍົງ: ແມ່ນການຕີລາຄາວ່າຜົນຂອງແຜນດຳເນີນງານສາມາດຮັກສາໄວ້ ຫຼື ສືບຕໍ່ພັດທະນາໄດ້ຫຼືບໍ່. |
| 4. | **ຢູ່ໃສ:** | ສະຖານທີ່ຂອງການປະຕິບັດກິດຈະກຳ |
| 5. | **ແນວໃດ:** | ໂດຍການນຳໃຊ້ຕາມແບບຟອມແຜນດຳເນີນງານຂອງກຸ່ມ |

# 2.4. ການວິເຄາະ, ທວນຄືນກິດຈະກຳກຸ່ມ

ເພື່ອທວນຄືນຄວາມເຂົ້າໃຈຕໍ່ບັນຫາ, ວິທີທາງເລືອກ ແລະ ເກີດການຕັດສິນໃຈອອກເປັນແຜນປະຕິບັດໃນການແກ້ໄຂຕໍ່ໄປເປັນຕົ້ນ:

- ທົບທວນຄືນບັນດາກິດຈະກຳທີ່ເຮັດຜ່ານມາ. ມີສິ່ງໃດທີ່ເຮັດສຳເລັດ ແລະ ສິ່ງທີ່ເປັນຮູບປະທຳ.
- ອັນໃດທີ່ກຸ່ມຄວນຖອດຖອນບົດຮຽນ, ຖ້າສິ່ງໃດດີຄວນນຳໃຊ້ ແລະ ເຜີຍແຜ່ຕໍ່ໄປ.
- ສິ່ງທີ່ຍັງບໍ່ສຳເລັດ ແລະຄວນປັບປຸງໂດຍທຽບໃສ່ແຜນການຈັດຕັ້ງປະຕິບັດ
- ມີການວາງແຜນກັບກຸ່ມໃນສິ່ງທີ່ຈະສືບຕໍ່.



ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ

ບ້ານ ດອນຕິ້ວ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ
ຕູ້ໄປສະນີ: 001888;   ໂທລະສັບ:  021– 732072
Fax: 021 - 732092

ພິມຄັ້ງທີ I ຈຳນວນ 1,500 ຫົວ
ເດືອນ ພະຈິກ 2017